**LOWELL PUBLIC SCHOOLS**
Henry J. Mroz Central Administration Offices
(ສຳນັກງານບໍລິຫານສ່ວນກາງ)
155 Merrimack Street
Lowell, MA 01852

15 ກັນຍາ 2020

ເຖິງຊຸມຊົນຂອງໂຮງຮຽນ Lowell Public Schools,

ພວກເຮົາຫວັງວ່າຈະໄດ້ຕ້ອນຮັບການກັບມາຂອງບັນດານັກຮຽນຂອງພວກເຮົາສຳລັບການເລີ່ມຕົ້ນສົກຮຽນ 2020-21 ໃນວັນພະຫັດ ທີ 17 ກັນຍາ ນີ້. ເນື່ອງຈາກຄວາມລ່າຊ້າຂອງໜ່ວຍງານຝ່າຍສະໜອງແຫ່ງຊາດ, ພວກເຮົາໄດ້ຮັບແຈ້ງຈາກຜູ້ຈຳໜ່າຍຂອງພວກເຮົາວ່າ: ຈຳນວນທີ່ເຫຼືອຂອງເຄື່ອງຟອກອາກາດທີ່ພວກເຮົາໄດ້ສັ່ງຊື້ລ່ວງໜ້ານັ້ນ ຈະບໍ່ໄດ້ມາຮອດຕາມກຳນົດເວລາຂອງການເປີດຮຽນມື້ທຳອິດ. ໃນປະຈຸບັນ, ພວກເຮົາມີເຄື່ອງຟອກອາກາດ 128 ໜ່ວຍ ທີ່ພ້ອມໃຊ້ງານໃນທົ່ວເຂດ. ເພື່ອຮັບປະກັນຄວາມປອດໄພຂອງນັກຮຽນ, ຄອບຄົວ ແລະ ເຈົ້າໜ້າທີ່ຂອງພວກເຮົາ, **ພວກເຮົາໄດ້ຕັດສິນໃຈຕັ້ງແຕ່ຕົ້ນວ່າຈະປ່ຽນແຜນການກັບຄືນມາຮຽນທີ່ໂຮງຮຽນຂອງພວກເຮົາ ເພື່ອຈຳກັດຈຳນວນຫ້ອງຮຽນທີ່ດຳເນີນການຮຽນການສອນພາຍໃນໂຮງຮຽນໃນຊ່ວງການເປີດສົກຮຽນໃໝ່.** ແຜນການເປີດສົກຮຽນໃໝ່ທີ່ໄດ້ຮັບການແກ້ໄຂ ແມ່ນມີດັ່ງນີ້:

- ນັກຮຽນທີ່ໄດ້ຮັບສິດໃນການເຂົ້າຮຽນຢູ່ທີ່ໂຮງຮຽນໃນຊ່ວງຕອນກາງເວັນຂອງໂຮງຮຽນພວກເຮົາທີ່ Dr. Janice Adie, Laura Lee Therapeutic and LeBlanc Therapeutic - ແມ່ນຈະຍັງຄົງຕ້ອງລາຍງານຕົວໃນອາຄານຮຽນເຫຼົ່ານີ້ ສາລັບການຮຽນການສອນພາຍໃນຫ້ອງຮຽນຕາມທີ່ໄດ້ກຳນົດໄວ້ໃນວັນພະຫັດ ທີ 17 ກັນຍາ ຂອງການເປີດຮຽນມື້ທຳອິດ.
- ນັກຮຽນທີ່ໄດ້ຮັບສິດໃນການເຂົ້າຮຽນຢູ່ທີ່ໂຮງຮຽນໃນໂປຣແກຣມການສຶກສາພິເສດທີ່ແຍກອອກຕ່າງຫາກຢ່າງຊັດເຈນ ເຊັ່ນ: ຫ້ອງຮຽນສຳລັບນັກຮຽນອໍທິດຕິກ (CSA), ການສຶກສາທັກສະຊີວິດ ແລະ ການວາງແຜນ (LEAP) ແລະ ຫ້ອງຮຽນສອນພາສາ - ແມ່ນຈະຍັງຄົງຕ້ອງລາຍງານຕົວໃນອາຄານຮຽນຂອງຕົນເອງສຳລັບການຮຽນການສອນພາຍໃນຫ້ອງຮຽນຕາມທີ່ໄດ້ກຳນົດໄວ້ໃນວັນພະຫັດ ທີ 17 ກັນຍາ ຂອງການເປີດຮຽນມື້ທຳອິດ.
- ນັກຮຽນໃນຊັ້ນຮຽນເກຣດ 1 ຫາ ເກຣດ 12 (ຜູ້ທີ່ຍັງບໍ່ໄດ້ຮັບມອບໝາຍໃຫ້ເຂົ້າຮ່ວມໂປຣແກຣມການສຶກສາພິເສດທີ່ແຍກອອກຕ່າງຫາກຢ່າງຊັດເຈນ) ເຊິ່ງໄດ້ຮັບການກຳນົດໄວ້ວ່າຈະຕ້ອງເຂົ້າຮຽນພາຍໃນໂຮງຮຽນ ແມ່ນຈະເລີ່ມຕົ້ນສົກຮຽນໃນຮູບແບບການຮຽນຜ່ານທາງໄກ. **ສຳລັບນັກຮຽນເຫຼົ່ານີ້, ຄອບຄົວຂອງພວກເຂົາຈະໄດ້ຮັບການອັບເດດກ່ຽວກັບວັນທີທີ່ຈະສາມາດກັບເຂົ້າໄປຮຽນຄືນພາຍໃນໂຮງຮຽນຂອງພວກເຮົາ.**
- ນັກຮຽນຊັ້ນຮຽນກຽມອະນຸບານ ແລະ ຊັ້ນອະນຸບານ ທີ່ໄດ້ຮັບສິດໃນການເຂົ້າຮຽນຢູ່ທີ່ໂຮງຮຽນ ແມ່ນຈະຍັງຄົງຕ້ອງລາຍງານຕົວໃນອາຄານຮຽນຂອງຕົນເອງຕາມທີ່ໄດ້ກຳນົດໄວ້ໃນວັນພະຫັດ ທີ 17 ກັນຍາ ຂອງການເປີດຮຽນມື້ທຳອິດຂອງພວກເຂົາ.
- ນັກຮຽນທຸກຄົນທີ່ລົງທະບຽນການຮຽນໃນຮູບແບບທາງໄກໃນປະຈຸບັນນັ້ນ ແມ່ນຈະສືບຕໍ່ຕາມແຜນທີ່ວາງໄວ້.

ຂ້າພະເຈົ້າເຂົ້າໃຈດີວ່າສິ່ງນີ້ກໍ່ໃຫ້ເກີດຄວາມຫຍຸ້ງຍາກ ແລະ ເຮັດໃຫ້ຄອບຄົວຂອງພວກເຂົາຜິດຫວັງສໍ່າໃດ. ກ່ອນທີ່ຈະທຳການຕັດດສິນໃຈນີ້, ພວກເຮົາໄດ້ລອງດຳເນີນການທັງໝົດ - ທັງໃນລະດັບທ້ອງຖິ່ນ ແລະ ລະດັບຊາດ - ເພື່ອຈັດຫາເຄື່ອງຟອກອາກາດມາໃຫ້ໄດ້ ເຊິ່ງພວກເຮົາເອງກໍມີຄວາມຕ້ອງການເພື່ອມາເປັນສ່ວນໜຶ່ງຂອງລະບຽບການຂອງພວກເຮົາ ເພື່ອຊ່ວຍໃນການປະຕິບັດແນວທາງດ້ານສຸຂະພາບ ແລະ ຄວາມປອດໄພທີ່ຈຳເປັນສຳລັບການເປີດການຮຽນການສອນພາຍໃນຫ້ອງຮຽນຂອງພວກເຮົາຄືນໃໝ່ໃຫ້ໄດ້ຢ່າງມີປະສິດທິພາບຍິ່ງຂຶ້ນ. ໃນທີ່ສຸດ, ພວກເຮົາໄດ້ໃຫ້ຄຳໝັ້ນສັນຍາແກ່ທ່ານວ່າ: ຈະຖືເອົາຄວາມປອດໄພຂອງນັກຮຽນ ແລະ ເຈົ້າໜ້າທີ່ເປັນບຸລິມະສິດຫຼັກຂອງພວກເຮົາ ແລະ ພວກເຮົາກໍຈະຍຶດໝັ້ນຢ່າງເດັດດ່ຽວຕໍ່ຄຳໝັ້ນສັນຍາດັ່ງກ່າວນີ້.

ໃນການວາງແຜນສຳລັບສົກຮຽນໃໝ່, ພວກເຮົາໄດ້ກຽມຮັບມືກັບສະຖານະການດັ່ງກ່າວນີ້ ແລະ ພວກເຮົາກໍພ້ອມທີ່ຈະຜັນປ່ຽນໄປເປັນການຮຽນແບບທາງໄກໃນທົ່ວທັງເຂດແບບຊົ່ວຄາວສຳລັບບັນດານັກຮຽນທີ່ໄດ້ລະບຸໄວ້ຂ້າງເທິງ ພ້ອມທັງຈະສືບຕໍ່ແຜນການເຂົ້າຮຽນໃນໂຮງຮຽນຂອງພວກເຮົາ ພາຍຫຼັງ

ທີ່ໄດ້ກວດສອບບັນດາຈຸດຂໍ້ມູນທີ່ກ່ຽວຂ້ອງກັບພະຍາດໂຄວິດ (COVID) ແລະ ຈັດຫາອຸປະກອນເພື່ອຄວາມປອດໄພ ພ້ອມທັງອຸປະກອນຂ້າເຊື້ອມາໃຫ້ໄດ້ຢ່າງຄົບຖ້ວນ.

ໃນການກະກຽມສໍາລັບວັນພະຫັດທີ່ຈະມາເຖິງນີ້, ທ່ານຈະໄດ້ຮັບແຈ້ງໂດຍກົງຈາກໂຮງຮຽນຂອງທ່ານກ່ຽວກັບແຜນສ່ວນບຸກຄົນສໍາລັບມື້ທໍາອິດຂອງການເຂົ້າຮຽນແບບທາງໄກຂອງລູກຂອງທ່ານ. ນອກຈາກນັ້ນ, ທ່ານຍັງຈະໄດ້ຮັບການອັບເດດກ່ຽວກັບການໃຫ້ບໍລິການອາຫານ ພ້ອມທັງການແຈກຢາຍອຸປະກອນການຮຽນຮູ້ແບບອອນລາຍຕ່າງໆ.

ຂໍຂອບໃຈທີ່ທ່ານປັບຕົວ ແລະ ທໍາຄວາມເຂົ້າໃຈຕໍ່ສິ່ງຕ່າງໆເຫຼົ່ານີ້ ໃນລະຫວ່າງທີ່ພວກເຮົາຊອກຫາຫົນທາງໃນການເລີ່ມຕົ້ນສົກຮຽນດ້ວຍວິທີການທີ່ປອດໄພທີ່ສຸດສໍາລັບນັກຮຽນ ແລະ ເຈົ້າໜ້າທີ່ທຸກຄົນຂອງພວກເຮົາ.

ດ້ວຍຄວາມນັບຖື ແລະ ຮັກແພງ,

Dr. Joel D. Boyd
Superintendent of Schools (ຜູ້ບໍລິຫານໂຮງຮຽນ)